**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້

ກົມກວດກາປ່າໄມ້

ເລກທີ.0638..../ກກປມ

ນະຄອນຫຼວງວຽງຈັນ, ວັນທີ.29.ພຶດສະພາ.2023

## ແຈ້ງການ

**ເຖິງ**: ພໍ່ແມ່ປະຊາຊົນ, ພະນັກງານ, ທະຫານ, ຕຳຫຼວດ, ນັກທຸລະກິດ, ກຸ່ມຄົນ ແລະ ພໍ່ຄ້າຊາວຂາຍ.

**ເລື່ອງ**: ໃຫ້ຢຸດຕິ! ການຄ້າ-ຂາຍ ສັດປ່າ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ ປະເພດຫວງຫ້າມ ຕາມສະຖານທີ່ຕ່າງໆ ແລະ ຫ້າມປະກາດ ຊື້-ຂາຍ, ສ້າງສື່ໂຄສະນາ, ວິດີໂອ, ຖ່າຍຮູບພາບ ການລ່າ ສັດປ່າ ຜ່ານສື່ອອນລາຍ.

- ອີງຕາມ ກົດໝາຍ ວ່າດ້ວຍ ສັດນ້ຳ ແລະ ສັດປ່າ ສະບັບ ເລກທີ 07/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມ ຄຳສັ່ງ ຂອງນາຍົກລັດຖະມົນຕີ ວ່າດ້ວຍການການເພີ່ມທະວີ ຄວາມເຂັ້ມງວດ ໃນການຄຸ້ມຄອງ ແລະ ກວດກາ ສັດປ່າ ແລະ ພືດປ່າ ປະເພດຫວງຫ້າມ ສະບັບເລກທີ 05/ນຍ, ລົງວັນທີ 08 ພຶດສະພາ 2018;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມກວດກາປ່າໄມ້ ສະບັບເລກທີ 1504/ກປ, ລົງວັນທີ 22 ເມສາ 2022.

ເພື່ອຈັດຕັ້ງປະຕິບັດ ກົດໝາຍ ວ່າດ້ວຍສັດນ້ຳ ແລະ ສັດປ່າ ສະບັບ ເລກທີ 07/ສພຊ, ປະມວນກົດໝາຍອາຍາ ສະບັບເລກທີ 26/ສພຊ, ຄຳສັ່ງ ຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 05/ນຍ ແລະ ສົນທິສັນຍາກົນ ວ່າດ້ວຍ ການຄ້າຂາຍ ຊະນິດພັນ ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ (CITES) ໃຫ້ເຂັ້ມງວດ ແລະ ເພື່ອ ຕ້ານ ແລະ ສະກັດກັ້ນ ປະກົດການຫຍໍ້ທໍ້ ທີ່ເກີດຂຶ້ນໃນສັງຄົມ, ຊຶ່ງໃນໄລຍະຜ່ານມາ ພົບເຫັນ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີການຄ້າ-ຂາຍ ສັດປ່າ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ ຕາມສະຖານທີ່ຕ່າງໆ: ຕະຫຼາດ, ໂຮງແຮມ, ຮ້ານອາຫານ, ຫ້າງຮ້ານ, ສະຖານທີ່ທ່ອງທ່ຽວ, ຕາມຖະໜົນຫົນທາງ ແລະ ອື່ນໆ, ນອກນັ້ນ ຍັງມີການ ໂຄສະນາ, ປະກາດ ຊື້-ຂາຍ, ສ້າງສື່ໂຄສະນາ, ວິດີໂອ, ຖ່າຍຮູບພາບ ການລ່າ ສັດປ່າ ປະເພດຫວງຫ້າມ ຜ່ານແພຣດຟອມ ສື່ອອນລາຍ (Platform Socail Media) ເຊັ່ນ: ເຟສບຸກ, ວີແຊັດ, ຢູທູບ, ຕິກຕ໋ອກ ແລະ ອື່ນໆເປັນຕົ້ນ ໂດຍບໍ່ຢ້ານກົວ ຕໍ່ກົດໝາຍ ແລະ ລະບຽບການ. ສະນັ້ນ, ກົມກວດກາປ່າໄມ້ ຈຶ່ງຂໍແຈ້ງມາຍັງ ພໍ່ແມ່ປະຊາຊົນ, ພະນັກງານ, ທະຫານ, ຕຳຫຼວດ, ນັກທຸລະກິດ, ກຸ່ມຄົນ ແລະ ພໍ່ຄ້າຊາວຂາຍ ຄືດັ່ງນີ້:

1. ໃຫ້ ຢຸດຕິ ການຄ້າ-ຂາຍ, ຄອບຄອງ, ເຄື່ອນຍ້າຍ, ນຳເຂົ້າ-ສົ່ງອອກ ສັດປ່າ, ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ ປະເພດຫວງຫ້າມ (ບັນຊີ I) ຢ່າງເດັດຂາດ, ຖ້າລະເມີດ ຈະຖືກລົງໂທດ ຕາມປະມວນກົດໝາຍອາຍາ ໝວດທີ 9 ມາດຕາ 334, 335 ແລະ 337 ຊຶ່ງຈະຖືກຕັດອິດສະລະພາບ (ຕິດຄຸກ) ແຕ່ ຫົກເດືອນ ຫາ ສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ;
2. ຢຸດຕິ ການປະກາດ ຊື້-ຂາຍ, ສ້າງສື່ໂຄສະນາ, ວິດີໂອ, ຖ່າຍຮູບພາບ ການລ່າ, ທໍລະມານສັດປ່າ ປະເພດຫວງຫ້າມ ຜ່ານສື່ອອນລາຍ ເຊັ່ນ: ເຟສບຸກ, ວີແຊັດ, ຢູທູບ, ຕິກຕັອກ, ກຸ່ມວັອດແອັບ, ກຸ່ມລາຍ ແລະ ອື່ນໆ ຢ່າງເດັດຂາດ, ຫາກເຈົ້າໜ້າທີ່ ສືບຮູ້ ແລະ ຈັບໄດ້ ຈະຖືກລົງໂທດ ຕາມປະມວນກົດໝາຍອາຍາ ໝວດທີ 9 ມາດຕາ 331 ຊຶ່ງ

ຈະຖືກລົງໂທດຕັດອິດສະລະພາບ(ຕິດຄຸກ) ແຕ່ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ 3.000.000 ກີບ ຫາ 10.000.000ກີບ;

3. ໃຫ້ ພໍ່ແມ່ປະຊາຊົນ, ພະນັກງານ, ທະຫານ, ຕຳຫຼວດ ແລະ ການຈັດຕັ້ງ ເປັນຫູເປັນຕາ ຊ່ວຍເຈົ້າໜ້າທີ່ປ່າໄມ້ ແລະ ເປັນເຈົ້າການ ເຂົ້າຮ່ວມໃນການ ຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ ສັດປ່າໃຫ້ມີຄວາມຍືນຍົງ, ຫາກ ກໍລະນີພົບເຫັນ ມີການລ່າ, ຄ້າ-ຂາຍ, ເຄື່ອນຍ້າຍ ແລະ ຄອບຄອງ ສັດປ່າ ລວມທັງຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ ປະເພດຫວງຫ້າມ (ບັນຊີ I) ໃຫ້ລາຍງານເຈົ້າໜ້າທີ່ປ່າໄມ້ ຜ່ານໂທລະສັບສາຍດ່ວນ 1601, ເວັບໄຊ້ ກົມກວດກາປ່າໄມ້ ລິ້ງ: https://dofi.maf.gov.la ແລະ ເພຈເຟດບຸກ ກົມກວດກາປ່າໄມ້ ລິ້ງ: https://m.facebook.com/DOFILAOS/;
4. ໃຫ້ກອງກວດກາປ່າໄມ້ ປະຈຳແຂວງ ແລະ ນະຄອນຫຼວງ ຈັດຕັ້ງຜັນຂະຫຍາຍ ແລະ ເພີ່ມທະວີ ຄວາມ ເອົາໃຈໃສ່ໃນການໂຄສະນາເຜີຍແຜ່ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ພ້ອມທັງ ກວດກາລາດຕະເວນ ຕາມສະຖານທີ່ເປົ້າໝາຍ ແລະ ຈຸດຫຼໍ່ແຫຼມຕ່າງໆ ລວມທັງຕິດຕາມປະກົດການຫຍໍ້ທໍ້ ກ່ຽວກັບສັດປ່າ ທາງສື່ສັງຄົມ ອອນລາຍ, ຫາກພົບເຫັນ ການລະເມີດ ໃຫ້ສືບສວນ-ສອບສວນ ແລະ ດຳເນີນຄະດີ ຕາມລະບຽບກົດໝາຍ.

ສະນັ້ນ, ຈຶ່ງແຈ້ງ ມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມ ແຈ້ງການສະບັບນີ້ຢ່າງເຂັ້ມງວດ.

**ວ່າການ ຫົວໜ້າກົມ**

ກະຊວງກະສິກຳ ແລະ ປ່າໄມ້
ກົມກວດກາປ່າໄມ້

ສຸນັນທາ ຈຸນລະມະນີ

**<u>ບ່ອນນຳສົ່ງ:</u>**

- ຫ້ອງການກະຊວງກະສິກຳ ແລະ ປ່າໄມ້ 01 ສະບັບ; (ເພື່ອລາຍງານ)
- ກອງກວດກາປ່າໄມ້ ປະຈຳແຂວງ ແລະ ນະຄອນຫຼວງ 01 ສະບັບ; (ເພື່ອປະຕິບັດ)
- ໜ່ວຍງານກວດກາປ່າໄມ້ ປະຈຳເມືອງ ແລະ ນະຄອນ 01 ສະບັບ; (ເພື່ອປະຕິບັດ)
- ເກັບຮັກສາໄວ້ 01 ສະບັບ.